# ບົດຂ່າວ

## ງານນຳສະເໜີຂໍ້ມູນແກ່ນັກລົງທຶນກ່ຽວກັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ມວນຊົນໃນຮູບແບບ RO/PO

ນະຄອນຫຼວງວຽງຈັນ, ທີ່ ໂຮງແຮມ ດອນຈັນ ພາເລດ, ເວລາ 14:00 ວັນທີ 25/07/2017




ໃນວັນທີ 25 ກໍລະກົດ 2017 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮ່ວມກັບ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ (ບລຈ) ໃນນາມບໍລິສັດທີ່ປຶກສາທາງດ້ານການເງິນຂອງ ທຄຕລ ໄດ້ຈັດງານນຳສະເໜີຂໍ້ມູນແກ່ນັກລົງທຶນກ່ຽວກັບການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ (Right Offering) ແລະ ຈຳໜ່າຍຮຸ້ນໃຫ້ແກ່ມວນຊົນທົ່ວໄປ (Public Offering).

ໃຫ້ກຽດເຂົ້າຮ່ວມງານໃນຄັ້ງນີ້ ປະກອບມີ:

ທ່ານ ວັນຄຳ ວໍຣະວົງ, ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ

ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ

ທ່ານ ຄຳແກ້ວ ວິສີສົມບັດ, ປະທານບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ທ່ານ ສົມປະສົງ ພິມມະສານ, ຫົວໜ້າພະແນກຄຸ້ມຄອງການອອກຈຳໜ່າຍຮຸ້ນ, ສຳນັກງານຄຸ້ມຄອງຫຼັກຊັບ

ທ່ານ ລິນ ລີ, ຜູ້ອຳນວຍການ ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ

ທ່ານ ຊຸນເຫລີຍ, ເລຂາທິການສະພາການຄ້າຈີນ ປະຈຳ ສປປ ລາວ

ທ່ານ ຊິນຈີ້ຄັງ, ປະທານ ສະພາການຄ້າ ລາວ-ຈີນ ຈິ່ງຫົວ

ທ່ານ ຫລີຈ່າວເຜີງ, ປະທານ ສະພາການຄ້າ ແຂວງຫູນານ ປະເທດຈີນ ປະຈຳ ສປປ ລາວ

ທ່ານ ຫຼີງຜ່ານ, ຮອງປະທານ ສະພາການຄ້າ ແຂວງກວາງຕຶ້ງ ປະເທດຈີນ ປະຈຳ ສປປ ລາວ

ພ້ອມດ້ວຍຜູ້ຕ່າງໜ້າຈາກ ທະນາຄານແຫ່ງ ສ.ປ.ປ ລາວ, ກະຊວງການເງິນ, ຄະນະຜູ້ແທນຈາກ ທຄຕລ, ຄະນະຜູ້ແທນຈາກ ບລຈ ພ້ອມດ້ວຍບັນດານັກລົງທຶນລາວ, ຕ່າງປະເທດ ແລະ ສື່ມວນຊົນ ຈາກຫລາຍພາກສ່ວນ.




ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ກ່າວໃນພິທີວ່າ: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂອງພວກເຮົາ ຕະຫລອດໄລຍະເວລາເກືອບ 28 ປີ ຫຼັງຈາກການຫັນເປັນທະນາຄານທຸລະກິດ, ທຄຕລ ໄດ້ເອົາໃຈໃສ່ມຸ້ງໝັ້ນໃນການພັດທະນາທະນາຄານໃຫ້ບັນລຸວິໄສທັດ ເປັນທະນາຄານທີ່ເຂັ້ມແຂງ, ທັນສະໄໝ ກ້າວສູ່ມາດຕະຖານສາກົນ, ພ້ອມກັນນັ້ນ ກໍ່ໄດ້ຍົກສູງການດຳເນີນທຸລະກິດໃຫ້ສອດຄ່ອງກັບລະບຽບ, ກົດໝາຍ ແລະ ຫຼັກການສາກົນ.

ການອອກຈຳໜ່າຍຮຸ້ນເພີ່ມທຶນໃນຄັ້ງນີ້ ແມ່ນແຜນການລະດົມທຶນເພື່ອເພີ່ມທຶນຕາມທີ່ໄດ້ຖືກຮັບຮອງຈາກກອງປະຊຸມສະໄໝສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ 2012 ຊຶ່ງໄດ້ຈັດຂຶ້ນໃນຄັ້ງວັນທີ 29 ມີນາ ປີ 2013. ການຄັດເລືອກບໍລິສັດທີ່ປຶກສາການເງິນ ບລຈ ເພື່ອເປັນບໍລິສັດຄໍ້າປະກັນການຈຳໜ່າຍຮຸ້ນ ຫລື Underwriter ແມ່ນເພື່ອຮັບປະກັນໃຫ້ແກ່ການຈຳໜ່າຍຮຸ້ນສາມັນເພີ່ມທຶນຈຳນວນ 71.145.700 ຮຸ້ນ, ມູນຄ່າລວມທັງໝົດແມ່ນ 360.000.060.000 ກີບ ໃຫ້ໄດ້ຮັບຜົນສຳເລັດ ຕາມແຜນການ ທີ່ວາງໄວ້ ໂດຍແບ່ງເປັນລະອຽດຄື:

1. ຈຳນວນຮຸ້ນທີ່ສະເໜີອອກຈຳໜ່າຍໃຫ້ ຜູ້ຖືຮຸ້ນເດີມ ໂດຍກຳນົດສັດສ່ວນສອງຮຸ້ນເດີມຕໍ່ໜຶ່ງຮຸ້ນໃໝ່ (2:1)ຈຳນວນ 68.288.600 ຮຸ້ນ
2. ຈຳນວນຮຸ້ນທີ່ສະເໜີອອກຈຳໜ່າຍໃຫ້ ມວນຊົນທົ່ວໄປ ຈຳນວນ 2.857.100 ຮຸ້ນ

ເງື່ອນໄຂ ແລະ ຮູບແບບການຄ້ຳປະກັນຄັ້ງນີ້ແມ່ນຄ້ຳປະກັນການຈຳໜ່າຍຮຸ້ນທັງໝົດ ຫຼື Firm Commitment Underwriting. ທຄຕລ ຈະໄດ້ຮ່ວມກັບ ບລຈ ຈັດງານໂຄສະນາ ເຜີຍແຜ່ຂໍ້ມູນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນຂອງ ທຄຕລ ລະຫວ່າງວັນທີ 25 ກໍລະກົດ ປີ 2017 ເຖິງ 3 ສິງຫາ ປີ 2017 ຄື: ທີ່ ຊຽງໄຮ້, ສ.ປ ຈີນ ໃນວັນທີ 27/07/2017, ທີ່ແຂວງສະຫວັນນະເຂດ ໃນວັນທີ 02/08/2017 ແລະ ທີ່ ແຂວງຈຳປາສັກ ທີ່ 03/08/2017. ທັງນີ້, ເພື່ອເປີດໂອກາດໃຫ້ແກ່ບັນດານັກລົງທຶນ ແລະ ຜູ້ ມີແຜນເປີດຈອງຊື້ຮຸ້ນ RO/PO ໃນລະຫວ່າງວັນທີ 28 ສິງຫາເຖິງ 1 ກັນຍາ ປີ 2017. ການສອບຖາມກ່ຽວກັບການຈອງຊື້ຮຸ້ນ ທຄຕລ ແມ່ນ 021 419210.

ບລຈ ໃນນາມເປັນຜູ້ຄ້ຳປະກັນການອອກຈຳໜ່າຍຮຸ້ນສາມັນເພີ່ມທຶນໃຫ້ແກ່ ທຄຕລ ໄດ້ໃຫ້ຄຳເຫັນວ່າ: ຮຸ້ນຂອງ ທຄຕລ ເປັນຮຸ້ນທີ່ມີທ່າແຮງບົ່ມຊ້ອນຫຼາຍຢ່າງເຊັ່ນ: ລາຄາຂອງຮຸ້ນຂອງ ທຄຕລ ໄດ້ມີການຊື້-ຂາຍກັນໃນລາຄາປະມານ 5.500 ກີບຕໍ່ຮຸ້ນໃນປັດຈຸບັນ, ລາຄາທຽບກຳໄລສຸດທິຕໍ່ຮຸ້ນ (P/E) ມີພຽງແຕ່ 4,33 ເທົ່າ, ຊຶ່ງ P/E ຂອງຂະແໜງການທະນາຄານໃນປະເທດອ້ອມຂ້າງແມ່ນຊື້-ຂາຍການທີ່ P/E 10,23 ເທົ່າ ແລະ ຖ້າທຽບໃສ່ມູນຄ່າຕາມບັນຊີ 9.615 ກີບຕໍ່ຮຸ້ນໃນປີ 2016 ແມ່ນຖືວ່າຕ່ຳຫຼາຍ.

ທຄຕລ ພາຍຫຼັງຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບໃນປີ 2011 ເປັນຕົ້ນມາ, ທຄຕລ ໄດ້ມີການປັນຜົນໃຫ້ຜູ້ຖືຮຸ້ນຕໍ່ເນື່ອງທຸກໆປີ, ໂດຍອັດຕາຜົນຕອບແທນຈາກເງິນປັນຜົນແມ່ນບໍ່ຫຼຸດ 7,88% ຕໍ່ປີ ແລະ ທີ່ໂດດເດັ່ນທີ່ສຸດແມ່ນໃນປີ 2016 ທຄຕລ ໄດ້ມີການປັນຜົນໄປແລ້ວປະມານ 614 ກີບຕໍ່ຮຸ້ນ ຊຶ່ງຄິດເປັນອັດຕາຜົນຕອບແທນຈາກເງິນປັນຜົນປະມານ 11,16%. ທຄຕລ ເປັນຮຸ້ນທີ່ມີອະນາຄົດທີ່ດີ ແລະ ຈ່າຍເງິນປັນຜົນສູງທີ່ສຸດໃນຕະຫຼາດຫຼັກຊັບລາວໃນເວລານີ້. ນັກລົງທຶນຕ່າງປະເທດ ບໍ່ວ່າຈະເປັນບຸກຄົນ, ກອງທຶນ, ສະຖາບັນໃຫ້ຄວາມສົນໃຈ ແລະ ພ້ອມຈະລົງທຶນໃນຮຸ້ນທີ່ດີແບບນີ້.